# ການຕິດຕາມ ແລະ ປະເມີນຜົນໂຄງການ

ສະເໜີໂດຍ: ກົມແຜນການ ແລະ ການຮ່ວມມື

9/9/2014

# 1. <u>ນິຍາມ:</u> *ການຕິດຕາມ ແລະການປະເມີນຜົນ ແມ່ນຫຍັງ?*

- ***ການຕິດຕາມ:*** ແມ່ນການເກັບກຳຂໍ້ມູນ ການນຳໃຊ້ຊັບພະຍາກອນ ໃນການຈັດຕັ້ງປະຕິບັດໂຄງການ ແລະ ຕິລາຄາຄວາມຄືບໜ້າຂອງໂຄງການນັ້ນຖືກຕ້ອງຕາມຈຸດປະສົງຫລືບໍ່.
- ***ການປະເມີນຜົນ:*** ແມ່ນການປະເມີນເປັນແຕ່ລະໄລຍະກ່ຽວກັບ ປະສິດທິພາບ, ປະສິດທິຜົນ, ຜົນກະທົບ, ຄວາມຍືນຍົງ ແລະ ຄວາມກ່ຽວຂ້ອງການດຳເນີນງານໃນເງື່ອນໄຂຂອງຈຸດປະສົງທີ່ໄດ້ກຳນົດໄວ້.

➢ ເວົ້າງ່າຍໆ, ***ການປະເມີນຜົນ*** ແມ່ນການຕອບຄຳຖາມກ່ຽວກັບແຜນງານ ຫຼື ໂຄງການຂອງເຈົ້າ.

# 2. ແຜນງານ ແລະໂຄງການແມ່ນຫຍັງ?

- **ແຜນງານ:** ແມ່ນແຜນການລວມທີ່ມີຈຸດປະສົງສະເພາະໃດນຶ່ງ ເວົ້າລວມແລ້ວ ນອນຢູ່ໃນແຜນງານນຶ່ງແມ່ນມີຫລາຍໂຄງການ ແລະ ກິດຈະກຳຕ່າງໆ ທີ່ຈະຕ້ອງປະຕິບັດເພື່ອບັນລຸເປົ້າໝາຍຂອງຂະແໜງການດັ່ງກ່າວ.
- **ໂຄງການ:** ແມ່ນກຸ່ມກິດຈະກຳ ຫຼື ໜ້າວຽກຕ່າງໆ ທີ່ຈັດຕັ້ງປະຕິບັດໃນເຂດນຶ່ງຫຼືດ້ວຍແຫຼ່ງທຶນໃດນຶ່ງສະເພາະໃນແຜນງານນຶ່ງຂະແໜງການວິຊາສະເພາະຕ່າງໆໂດຍທົ່ວໄປແລ້ວແມ່ນມີຫຼາຍໂຄງການ.

# 3.ການຕິດຕາມແລະການປະເມີນຜົນໃນຮອບວຽນດຳເນີນງານຂອງໂຄງການ



# 4. ວຽກງານກິດຈະການກໍ່ສ້າງ ມີ:

1. ການສຶກສາຄວາມເປັນໄປໄດ້ ຂອງໂຄງການການກໍ່ສ້າງ;
2. ການສຳຫຼວດ, ອອກແບບໂຄງການກໍ່ສ້າງ ແລະ ການກຳນົດການນຳໃຊ້ວັດສະດຸກໍ່ສ້າງ;
3. ການອະນຸຍາດກໍ່ສ້າງ;
4. ການສະໜອງພື້ນທີ່ໂຄງການກໍ່ສ້າງ;
5. ການຈັດຕັ້ງປະຕິບັດໂຄງການກໍ່ສ້າງ;
6. ການຄວບຄຸມ ການກໍ່ສ້າງ;
7. ການປົກປັກຮັກສາ ແລະ ນຳໃຊ້ສິ່ງກໍ່ສ້າງ.

# 5. ເປັນຫຍັງການຕິດຕາມ ແລະ ປະເມີນຜົນ ຈຶ່ງສຳຄັນ?

- **<u>ທັດສະນະດ້ານການຄຸ້ມຄອງ:</u>**
- **ການຊີ້ນຳ ແລະ ຄວາມສາມາດກວດສອບ/ຄວາມຮັບຜິດຊອບ**
- ການຕັດສິນໃຈກ່ຽວກັບການສະໜອງທຶນ (ເງິນງົບປະມານ) ໃນອະນາຄົດໂດຍອີງໃສ່ຜົນໄດ້ຮັບ
- ຮັບປະກັນມວນຊົນ ແລະ ຜູ້ມີສ່ວນຮ່ວມວ່າເງິນໄດ້ຮັບການໃຊ້ຈ່າຍຢ່າງຖືກຕ້ອງ
- ຮັບປະກັນຄວາມສາມາດກວດສອບ (ຄວາມຮັບຜິດຊອບ) ຂອງພະນັກງານ ຫຼື ຜູ້ຮັບເໝົາ
- ຈຳເປັນຕ້ອງຮູ້ວ່າ ແຜນງານໄດ້ຜົນຕາມທີ່ຕ້ອງການຫຼືບໍ່

# *6. ເປັນຫຍັງການຕິດຕາມ ແລະປະເມີນຜົນ ຈຶ່ງສຳຄັນ? (ຕໍ່)*

- **ການຮຽນຮູ້**
- ເສີມຂະຫຍາຍການຮຽນຮູ້ໃນບັນດາຜູ້ມີສ່ວນຮ່ວມ
- **<u>ທັດສະນະດ້ານແຜນງານ/ໂຄງການ</u>**
- **ການອອກແບບ ແລະ ການຈັດຕັ້ງປະຕິບັດ**
- ໃຫ້ຄືນຂໍ້ມູນຂ່າວສານເພື່ອປັບປຸງແຜນງານ/ໂຄງການໃຫ້ດີຂື້ນ
- ຈຳເປັນຕ້ອງຮຽນຮູ້ ແລະສ້າງການປ່ຽນແປງຕໍ່ໂຄງການ/ແຜນງານໃສ່ຄວາມເປັນຈິງ.

# 7. ບາດກ້າວໃນຂະບວນການຕິດຕາມ ແລະປະເມີນຜົນ

**ການປະເມີນຜົນ** | **ການຕິດຕາມ**

1.ກຳນົດ ແລະ ປັບປຸງຄຳຖາມ

1.ກຳນົດ ແລະ ປັບປຸງຄຳຖາມ

2.ເລືອກການອອກແບບການປະເມີນ

2.ເລືອກຜົນໄດ້ຮັບແລະຜົນງານທີ່ຈະວັດແທກ

ວາງແຜນ

3.ປັບປຸງຕົວຊີ້ບອກ ແລະວິທີການ

4.ກຳນົດວິທີເກັບຂໍ້ມູນ ແລະແຫຼ່ງຂໍ້ມູນ

5.ກຳນົດວິທີວິໄຈຂໍ້ມູນ

6.ທົບທວນ ແລະທົດສອບແຜນການຂອງເຈົ້າ

ກະທຳ → 7.ປະຕິບັດແຜນການຂອງເຈົ້າ

ລາຍງານ → 8.ລາຍງານ ແລະນຳໃຊ້ຜົນໄດ້ຮັບ

# 8. ບົດລາຍງານຕົ້ນຕໍກ່ຽວກັບການປະເມີນຜົນຄວນມີ:

- ມີໂຄງສ້າງທີ່ດີ
- ອາດລວມມີຕາຕະລາງ, ກຼາບຟິກ, ຮູບສະແດງ
- ພາສາທີ່ໃຊ້ຄວນງ່າຍ, ຈະແຈ້ງ ແລະ ຊັດເຈນ
- ຄວນມີຫົວຂໍ້ ແລະ ຫົວຂໍ້ຍ່ອຍທີ່ເໝາະສົມເພື່ອໃຫ້ອ່ານໄດ້ງ່າຍ
- ຂໍ້ສະຫຼຸບຄວນຕັ້ງຢູ່ບົນພື້ນຖານຂອງຜົນໄດ້ຮັບ
- ບໍ່ຄວນມີຄຳສັບຫຼາຍເກີນໄປ ຫຼື ມີຂະໜາດເກີນຄວາມຕ້ອງການ.

# ຂໍຂອບໃຈ ທີ່ຕິດຕາມ

